ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ ຈັບມື ສກຈບ ວັນດາລາ ໃນການບໍລິການຊໍາລະສະສາງ







ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮ່ວມມືກັບສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ (ສກຈບ) ວັນດາລາ ກ່ຽວກັບການບໍລິການຊໍາລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT) ຊຶ່ງໄດ້ຈັດຂຶ້ນໃນວັນທີ 25 ກັນຍາ 2019 ທີ່ ຮ້ານອາຫານອິນທາວ, ນະຄອນຫຼວງວຽງຈັນ ຕາງໜ້າເຊັນສັນຍາໃນຄັ້ງນີ້ມີທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອໍານວຍການໃຫຍ່ ທຄຕລ ແລະ ທ່ານ ພອນໄຊ ວັນດາລາ ຜູ້ອໍານວຍການສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ວັນດາລາ ໂດຍການເຂົ້າຮ່ວມເປັນສັກຂີພະຍານຂອງຄະນະຜູ້ບໍລິຫານທັງສອງຝ່າຍ.

ສັນຍາວ່າດ້ວຍການບໍລິການຊໍາລະຄ່າບໍລິການຜ່ານ ທຄຕລ (Bill Payment) ລະຫວ່າງ ທຄຕລ ແລະ ສກຈບ ວັນດາລາໃນຄັ້ງນີ້ ກໍ່ເພື່ອອໍານວຍຄວາມສະດວກໃນການຊໍາລະຄ່າບໍລິການຕ່າງໆຜ່ານ ທຄຕລ ເພື່ອເພີ່ມຊ່ອງທາງການໃຫ້ບໍລິການລູກຄ້າຂອງສະຖາບັນການເງິນ ວັນດາລາ ຜ່ານຫຼາຍຊ່ອງທາງຂຶ້ນຕື່ມ ໂດຍ ທຄຕລ ຈະໃຫ້ການບໍລິການຮັບຊໍາລະຄ່າບໍລິການຜ່ານເຄົາເຕີບໍລິການທົ່ວລະບົບ ທຄຕລ, ຜ່ານມືຖື Smartphone (BCEL One) ແລະ ຜ່ານ BCEL I-Bank.

ການບໍລິການຊໍາລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການທໍາອິດໃນປີ 2012 ແລະ ເປັນການບໍລິການທີ່ມີການຊົມໃຊ້ຫຼາຍ. ມາຮອດປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການ Bill Payment ຮ່ວມກັບຫຼາຍພາກສ່ວນ ໃນນັ້ນປະກອບມີການໃຫ້ບໍລິການຊໍາລະຄ່າສາທາລະນຸປະໂພກພື້ນຖານເຊັ່ນ: ຊໍາລະຄ່າໄຟຟ້າ, ນໍ້າປະປາ ແລະ ຄ່າໂທລະສັບ, ຄ່າພາສີອາກອນ, ຄ່າສາຍເຊົ່າ, ບັດນໍ້າມັນ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທແຫ່ງທີ່ 1 ແລະ ຊໍາລະຄ່າງວດເຊົ່າສິນເຊື່ອຊຶ່ງການບໍລິການ Bill Payment ທຄຕລ ໄດ້ພັດທະນາໃຫ້ສາມາດຊໍາລະຜ່ານຫຼາຍຊ່ອງທາງຄື: ຜ່ານ ATM, BCEL One, i-Bank ແລະ ຜ່ານປ່ອງບໍລິການ ທຄຕລ. ຮອດທ້າຍເດືອນ 6/2020, ທຄຕລ ມີ ATM 400 ກວ່າຕູ້, ຜູ້ລົງທະບຽນນໍາໃຊ້ BCEL One 400.000 ກວ່າ Users, i-Bank 16.000 ກວ່າ Users ,ກວມເອົາຕົວເລກຜູ້ນໍາໃຊ້ລະບົບຊໍາລະແບບອີເລັກໂທຣນິກຫຼາຍທີ່ສຸດໃນລະບົບທະນາຄານພາຍໃນປະເທດ, ຖ້າຂະຫຍາຍການຊໍາລະແບບອີເລັກໂທຣນິກອອກໄປໃຫ້ກວ້າງຂວາງເທົ່າໃດກໍ່ຈະເປັນການສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ລູກຄ້າຂອງທະນາຄານໃນການຊົມໃຊ້ການບໍລິການຫຼາກຫຼາຍປະເພດເທົ່ານັ້ນ.

ສກຈບ ວັນດາລາໄດ້ຮັບອະນຸຍາດສ້າງຕັ້ງຂຶ້ນຕາມໃບອະນຸຍາດດຳເນີນທຸລະກິດເລກ ທີ 52/ກຄສງ, ລົງວັນທີ 13/08/2015 ຊຶ່ງມີສຳນັກງານໃຫຍ່ຕັ້ງຢູ່ຫຼັກ KM 45 ຖະໜົນ 13 ເໜືອ ບ້ານສີວິໄລ ເມືອງໂພນໂຮງ ແຂວງວຽງຈັນ. ເບື້ອງຕົ້ນດຳເນີນທຸລະກິດເປັນໂຮງຊວດຈຳໃນປີ 2009 ເປັນຕົ້ນມາ ຍ້ອນເງື່ອນໄຂດັ່ງກ່າວຈຶ່ງເຮັດໃຫ້ການດຳເນີນທຸລະກິດທາງດ້ານການເງິນດັ່ງກ່າວ ໄດ້ມີການພັດທະນາແບບຕໍ່ເນື່ອງ .ຕົກມາຮອດວັນທີ 29/10/2018 ສກຈບ ວັນດາລາໄດ້ຂະຫຍາຍສາຂາຕື່ມ 1 ສາຂາ ຢູ່ເມືອງ ວັງວຽງ ແຂວງ ວຽງຈັນ, ມາຮອດປະຈຸບັນ ມີພະນັກງານທັງໝົດ 16 ຄົນ, ການບໍລິການລູກຄ້າສ່ວນໃຫຍ່ຢູ່ໃນກຸ່ມຄ້າຂາຍຍ່ອຍທົ່ວໄປ, ຄອບຄົວຂອງພະນັກງານ, ທະຫານ, ຕຳຫຼວດ ຈຳນວນໜຶ່ງທີ່ມີຄວາມຈຳເປັນທາງດ້ານສິນເຊື່ອດອກເບ້ຍຕໍ່າ. ສະນັ້ນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານດັ່ງກ່າວນັ້ນ, ສກຈບ ວັນດາລາ ຈຶ່ງຮ່ວມມືກັບທາງ ທຄຕລ ເປີດການບໍລິການການຊຳລະສະສາງຄ່າບໍລິການຕ່າງໆຜ່ານລະບົບ BILL PAYMENT ຂອງທະນາຄານດັ່ງກ່າວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ